Multicultural Problem Gambling Service for NSW
*strengthening people and families*

# ເຈ້ຍຂໍ້ມູນ

Lao

# ມີຄຳເລົ່າລືທີ່ບໍ່ເປັນຈິງ, ການເຊື່ອໂຊກລາງ ແລະ ຄວາມເຊື່ອແບບຜິດໆ ຫຼາຍຢ່າງຊຶ່ງມີຂຶ້ນຢູ່ຕາມຕູ້ຫຼິ້ນເກມ

**ຄຳເລົ່າລືທີ່ບໍ່ເປັນຈິງ 1**

ບັນດາຕູ້ເກມຕ່າງໆ ໄດ້ຖືກເຮັດໂປແກຣມ ໃຫ້ໄດ້ເງິນຖ້າຫາກ ວ່າໄດ້ມີການເສັຍ ມາຫຼາຍໆເທື່ອແລ້ວ ໃນຊ່ວງນຶ່ງ.

**ຄວາມຈິງ:**

ບັນດາຕູ້ຫຼິ້ນເກມຕ່າງໆ ແລ່ນແບບບໍ່ເລືອກ **ຕລອດເວລາ** ບໍ່ວ່າຈະມີການໄດ້ ຫຼືການເສັຍໃນ ເວລາທີ່ຜ່ານມາ.

**ຄຳເລົ່າລືທີ່ບໍ່ເປັນຈິງ 2**

ຕູ້ຫຼິ້ນເກມຈະ ຈ່າຍອອກ ຫຼາຍໃນເວລາ ພິເສດສະເພາະ ຂອງມື້.

**ຄວາມຈິງ:**

ບໍ່ມີຄວາມແຕກຕ່າງ ຫຍັງສຳລັບການທຳ ງານຂອງຕູ້ຫຼິ້ນເກມ ບໍ່ວ່າຈະຫຼິ້ນໃນເວລາ ສະເພາະຂອງຕອນ ກາງເວັນ ຫຼື ກາງຄືນຂອງ ມື້ກໍຕາມ

**ຄຳເລົ່າລືທີ່ບໍ່ເປັນຈິງ 3**

ຫຼັງຈາກທີ່ມີການ ເສັຍມາຫຼາຍຄັ້ງ ຄົນ ຫຼິ້ນຄວນສືບຕໍ່ການ ຫຼິ້ນເພາະວ່າຕູ້ຈະ "ຈ່າຍຄືນໃຫ້" ໂດຍ ການໃຫ້ມີການໄດ້ ເງິນຄືນ.

**ຄວາມຈິງ:**

ການຫຼິ້ນຄັ້ງທີ່ຜ່ານໆ ມາຈະບໍ່ມີອິດທິພົນ ໃດໆຕໍ່ເກມຄັ້ງອື່ນ, ຫຼືເກມອື່ນທີ່ຫຼິ້ນເປັນ ຊຸດ, ທີ່ອາດຈະ ຫຼິ້ນ ຕໍ່ໄປແຕ່ຢ່າງ ໃດເລີຍ.

**ຄຳເລົ່າລືທີ່ບໍ່ເປັນຈິງ 4**

ຕູ້ຫຼິ້ນເກມສາມາດຖືກເຮັດໃຫ້ຈ່າຍເງິນອອກໄດ້ດ້ວຍການເຮັດວິທີແບບຕ່າງໆ ເຊັ່ນ:

**ຄວາມຈິງ:**

- ປ່ຽນວິທີການຫຼິ້ນ — ຜິດ
- ລູບຄຳຕູ້ແບບຕ່າງໆ — ຜິດ
- ປ່ຽນຈຳນວນເງິນທີ່ລົງ — ຜິດ
- ປ່ຽນຈຳນວນແຖວຂອງເກມທີ່ຫຼິ້ນ — ຜິດ
- ການຄົ້ນພົບເຄັດລັບຂອງ "ທັກສະ" ໃນການຫຼິ້ນ — ຜິດ
- ການປ່ຽນຄວາມໄວຂອງການຫຼິ້ນ — ຜິດ

## ຕູ້ຫຼິ້ນເກມທຳງານແບບໃດ

ຜົນອອກຂອງທຸກໆເກມແມ່ນໄດ້ຖືກກຳນົດໄວ້ໂດຍເຄື່ອງແຈກຈ່າຍໂຕເລກແບບບໍ່ເລືອກ (Random Number Generator - RNG). ອັນນີ້ແມ່ນ "ຕູ້ສຸ່ງໂຊກ" ຊຶ່ງໄດ້ເລືອກເອົາເຄື່ອງໝາຍສຳລັບແຕ່ລະເກມໄວ້ແລ້ວ. ເທັກໂນໂລຈີຈະ ຄວບຄຸມລັກສນະຂອງເກມທັງໝົດຈາກການປ້ອນເງິນຫຼຽນ ຫຼື ເງິນໃບເພື່ອຈະກຳນົດຜົນອອກຂອງການໝູນແຕ່ລະຄັ້ງ.

## ດ້ວຍເຫດນີ້ ຜົນອອກຂອງເກມໃດນຶ່ງຈຶ່ງເປັນສິ່ງທີ່ທວາຍບໍ່ຖືກສເມີ

- ດັ່ງນັ້ນ ທ່ານຈຶ່ງ **ກະ** ໄວ້ໄດ້ໂລດວ່າຈະເສັຍເງິນໃນລະຍະຍາວ ເພາະວ່າທ່ານບໍ່ສາມາດໃຊ້ທັກສະແບບໃດໆເພື່ອຊນະຕູ້ເກມໄດ້.
- ຢ່າລົງເງິນທີ່ທ່ານບໍ່ສາມາດເສັຍໄດ້ - ຈົ່ງຈຳກັດຂອບເຂດ
- ພະຍາຍາມຈົດບັນທຶກຂອງການເສັຍແລະການໄດ້ຫຼັງຈາກການຫຼິ້ນແຕ່ລະຄັ້ງເພື່ອທ່ານຈະໄດ້ຮູ້ວ່າທ່ານໄດ້ຈ່າຍໄປເທົ່າໃດ
- ຖ້າທ່ານດື່ມເຫຼົ້າໃນເວລາທີ່ທ່ານຫຼິ້ນ ກໍຈົ່ງດື່ມໃຫ້ພໍປານກາງ - ດື່ມເຫຼົ້າຫຼາຍເກີນໄປອາດຈະນຳພາໄປສູ່ການຈ່າຍເງິນຫຼາຍຂຶ້ນກວ່າທີ່ທ່ານໄດ້ກະໄວ້ໃນຕອນທີ່ທ່ານເລີ້ມຫຼິ້ນໃໝ່ໆ.

## ຄົນຫຼິ້ນບາງຄົນອາດພົບພໍ້ບັນຫາເລື້ອງການຫຼິ້ນການພະນັນ. ລັກສະນະຕ່າງໆອາດຮວມເຖິງ:

- ຄິດເຖິງເລື້ອງການຫຼິ້ນການພະນັນຫຼາຍ
- ເພີ້ມຈຳນວນການລົງເງິນ ແລະ ຫຼິ້ນຕິດຕໍ່ໄປເພື່ອຕິດຕາມເອົາເງິນທີ່ເສັຍຄືນ
- ຊຸກເຊື່ອງລັກສະນະການຫຼິ້ນການພະນັນຈາກຄອບຄົວ ແລະ ໝູ່ເພື່ອນ
- ກູ້ຢືມເງິນເພື່ອເອົາມາຫຼິ້ນການພະນັນ, ຂາຍ ຫຼື ຈຳນຳສິ່ງຂອງໃນເຮືອນເພື່ອໃຫ້ມີເງິນຈ່າຍຄ່າບິລເກັບເງິນ ຫຼື ເພື່ອເອົາໄປຫຼິ້ນການພະນັນ
- ຫຼິ້ນການພະນັນເພື່ອໃຫ້ລືມບັນຫາ

## ຈົ່ງຕິດຕໍ່ພວກເຮົາຕາມໝາຍເລກ 1800 856 800 ລະຫວ່າງ 8.30 ໂມງເຊົ້າ ແລະ 5.00 ໂມງແລງ ວັນຈັນ ຫາ ວັນສຸກ

Diversity Health Institute
Quality Health Care for a Diverse Australia

ເພື່ອຂໍຄວາມຊ່ວຍເຫຼືອນອກເວລາບໍຣິການຂອງພວກເຮົາ ກະຣຸນາ ຕິດຕໍ່ Gambling Help Info line – ຊຶ່ງເປັນບ່ອນໃຫ້ຂໍ້ມູນກ່ຽວກັບບັນຫາການພະນັນ, ການໃຫ້ຄຳປຶກສາຫາລື ແລະ ສາຍຊ່ວຍແນະນຳສົ່ງ ຕາມໝາຍເລກ 1800 858 858 ຊຶ່ງເປີດບໍຣິການຕລອດ 24 ຊົ່ວໂມງ ເຈັດມື້ຕໍ່ອາທິດ.

Multicultural Problem Gambling Service ແມ່ນຄວາມຄິດລິເລີ້ມຮ່ວມກັນຂອງ Community Relations Commission For a Multicultural NSW ແລະ Sydney West Area Health Service. ເງິນຊ່ວຍເຫຼືອຂອງໂຄງການນີ້ແມ່ນອຸປຖັມໂດຍ ຣັຖບານຣັດນິວເຊົາທ໌ເວລສ໌ ຊຶ່ງມາຈາກ Responsible Gambling Fund (RGF). ບັນດາຄຳຄິດເຫັນທີ່ເວົ້າອອກໃນໜັງສືນີ້ ແມ່ນຄຳຄິດເຫັນຂອງຜູ້ຂຽນແຕ່ພຽງຜູ້ດຽວ.
ການອອກແບບ, ການແປ ແລະ ການພິມແມ່ນໄດ້ຮັບອະນຸຍາດຈາກ Australian Gaming Machine Manufacturers Association in 2008.